ໂຄງການພັດທະນາຊຸມຊົນເພື່ອຄໍ້າປະກັນ
ສະບຽງອາຫານແບບຍືນຍົງ
ທີເມືອງງາ ແລະ ເມືອງໄຊ , ແຂວງອຸດົມໄຊ

**Community Based Rural Development Project for Sustainable Food Security in Nga and Xay District Oudomxay Province**

# ບາງຂໍ້ແນະນຳເຕັກນິກວິທີການ ລ້ຽງຄັ່ງ




ຮຽບຮຽງໂດຍ: ປາພອນ ບູລົມ
( ທີປຶກສາວຽກງານປູຝັງ )
ບຸນເຄນ ມະນີຈິດ (ວິຊາການ)
Brice Pletsers (ຊ່ຽວຊານ)



ສະໜັບສະໜູນໂດຍ: ອົງການ DWHH / GAA


## ບົດນຳ.

ຄັ່ງເປັນແມງໄມ້ຊະນິດໜຶ່ງທີ່ອາໃສຢູ່ກັບລຳຕົ້ນຂອງໄມ້ ຫຼາຍຊະນິທີມີຢູ່ຕາມທຳມະຊາດແລະທີ່ຄົນເຮົາປູກເອງໄດ້ເຊັ່ນ: ຕົ້ນຖົ່ວແຮ,ຕົ້ນສົມສາ,ຕົ້ນໝາກແຟນ,ໝາກຂາມປ້ອມ,ຕົ້ນເປົ້າ… ໂດຍສະເພາະແມ່ນຕົ້ນໄມ້ທີ່ຍັງດິບ. ຄັ່ງມີຄຸນປະໂຫຍດຫຼາຍໆດ້ານເຊັ່ນ: ເປັນສີຍ້ອມຜ້າ,ໄໝ,ເຮັດນ້ຳມຶກພິມ,ນ້ຳມັນຂັດພື້ນ ຕາມລຳພ້າ ອື່ນໆ ແລະຍັງເປັນສິນຄ້າທາງດ້ານເສດຖະກິດສ້າງລາຍຮັບໃຫ້ແກ່ຄອບຄົວອີກດ້ວຍ.ຄັ່ງເປັນແມງໄມ້ທີ່ລ້ຽງໄດ້ງ່າຍ ສາມາດ ລ້ຽງໄດ້ທຸກລະດູແລະມີ 3 ຊະນິດແນວພັນຄັ່ງ ຄື: ແນວພັນຄັ່ງ ດໍ, ກາງ , ປີ ເຊິ່ງທາງໂຄງການ GAA ເມືອງງາ ແລະ ເມືອງໄຊ ໄດ້ສົ່ງເສີມການລ້ຽງຄັ່ງດໍ ມີ 3 ບ້ານ 8 ຄອບຄົວ 2.5 ha .ມີ: ບ້ານປາງແມງ,ບ້ານວັງຍານ, ແລະ ບ້ານຫ້ວຍໝອກ ສົກປີ 2005 - 2006

## 1. ການຕຽມພື້ນທີ່ ທີ່ຈະລ້ຽງຄັ່ງ:

- ຢູ່ໃນບ້ານເປົ້າໝາຍຂອງໂຄງການພວກນຳໃຊ້ ຕົ້ນຖົ່ວແຮເປັນບ່ອນລ້ຽງຄັ່ງ.
- ກ່ອນການຈະລ້ຽງຄັ່ງເຮົາຕ້ອງປູກຕົ້ນຖົ່ວແຮປະໄວ້ກ່ອນ ( ອາຍຸຕົ້ນຖົ່ວຢ່າງຕ່ຳ6ເດືອນຂຶ້ນໄປ )ຈິ່ງສາມາດປ່ອຍໄດ້, ເພື່ອຮັບປະກັນໃນການລ້ຽງຄັ່ງ.

## 2. ການປູກຕົ້ນຖົ່ວແຮເພື່ອປ່ອຍຄັ່ງ

- ລະດູການປູກແມ່ນຕົ້ນລະດູຝົນ 5-6ຂອງປີ.ທັງນັ້ນກໍ່ເພື່ອປ່ອຍຢູ່ໃນເດືອນ12ຫຼືເດືອ2
- ໄລຍະການປູກຕ້ອງແມ່ນ ກ້ວາງ 2mx ຍາວ 2 m ( ຢູ່ໃນພື້ນທີດິນຮາບພຽງ )
- ໄລຍະການປູກຕ້ອງແມ່ນ ກວ້າງ3 m x ຍາວ 2 m ( ຢູ່ໃນພື້ນທີດິນຄ້ອຍຊັນ)

## 3. ແນວພັນຄັ່ງ ມີ 3 ຊະນິດ ຄື:

3.1 . ແນວພັນຄັ່ງດໍ ມີອາຍຸ 4 ເດືອນ
3.2 . ແນວພັນຄັ່ງກາງ ມີອາຍຸ 6 ເດືອນ
ເດືອນຈຳນວນທີ່ໃຊ້ 30-40 kg / ha
(ອີງໃສ່ຮັ່ງຄັ່ງນ້ອຍຫຼືໃຫ່ຍ)ຜົນຜະລິດ
ສະເລ່ຍ 800-1000 ກິໂລ / ຮຕ
3.3 . ແນວພັນຄັ່ງປີ ມີອາຍຸ 12 ເດືອນ

## 4. ວິທີການປ່ອຍຄັ່ງ

- ຕ້ອງຕັດແຕ່ງກິ່ງງ່າຕົ້ນຖົ່ວແຮທີນ້ອຍອອກເພື່ອຮັບປະກັນໃນການລ້ຽງຄັ່ງ
- ຕ້ອງມັດແນວພັນຄັ່ງ ( ຮັ່ງຄັ່ງ ) ກົງກັນຂ້າມກັບທາງທິດຕາເວັນຂຶ້ນ ( ເພື່ອບໍ່ໃຫ້ແນວພັນຄັ່ງຮັບແສງແດດ 100% )

➢ ຕ້ອງສັງເກດເບິ່ງຈຳນວນຄັ່ງອ່ອນ1-2ມື້ ທີ່ຂື້ນຢູ່ໃນຕົ້ນຖົ່ວແຮ ( ຄັ່ງອ່ອນຈະເປັນສີແດງ ຖ້າຫາກ ແມ່ຄັ່ງຂື້ນຫຼາຍແລ້ວ ເຮົາສາມາດຍ້າຍຮັ່ງຄັ່ງໄປໃສ່ຕົ້ນອື່ນ,ອີງໃສ່ຮັ່ງຄັ່ງນ້ອຍຫຼືໃຫ່ຍ )

➢ ຫຼັງຈາກປ່ອຍຄັ່ງໄດ້ 7-10 ວັນ ເຮົາມາດເກັບກູ້ຮັ່ງຄັ່ງອອກຈາກຕົ້ນຖົ່ວແຮ.ໄວ້ຂາຍຕໍ່ໄປ

## 5.ສັດຕູ ແລະ ການປ້ອງກັນກຳຈັດ

➢ ມົດ: ມັກຈະເປັນສັດຕູຄັ່ງທີ່ຮ້າຍແຮງໃນຊ່ວງທີ່ຕົວຄັ່ງຍັງອ່ອນ ແລະ ມົດມັກຈະດູດກິນໂຕຄັ່ງອ່ອນ ຢູ່ໃນຊ່ວງຄັ່ງ ມີອາຍຸ7-10ວັນ

➢ ວິທີການປ້ອງກັນ: ໃຊ້ຜ້າຈຸບນ້ຳມັນເຄື່ອງທີ່ເຮົາບໍ່ໃຊ້ແລ້ວ ມັດອ້ອມຕົ້ນຖົ່ວແຮ ເພື່ອປ້ອງ ກັນບໍ່ໃຫ້ມົດໄຕ່ຂຶ້ນໄປ ແລະອະນາໄມພື້ນ ທີ່ອ້ອມຕົ້ນຖົ່ວແຮ.

➢ ເພັຍແປ້ງ : ເປັນສັດຕູທີ່ສຳຄັນທີຈະດູດນ້ຳລ້ຽງຕາມງ່າ ແລະ ໃບຂອງລຳຕົ້ນ ເຮັດໃຫ້ໃບລົ້ນແລະລຳຕົ້ນຈະຫ່ຽວແຫ້ງຕາຍໃນທີ່ສຸດ

➢ ການປອ້ງກັນແລະກຳຈັດ : ໃຊ້ຢາສະໝຸນໄພຊີດພົ້ນ ຫຼື ຕັດແຕ່ງກິ່ງງ່ານັ້ນອອກ

## 6. ການເກັບກູ້ຄັ່ງ :

➢ຕ້ອງສັງເກດເບິ່ງຢູ່ໃນຊ່ວງອາທິດສຸດທ້າຍຂອງອາຍຸຄັ່ງ ( ປະມານ 130-140 ວັນ) ຕົວຄັ່ງຈະມີສີໂມກຂາວ ມີຂົນຍາວ ຫຼັງຈາກນັ້ນຂົນຈະລົ້ນ ແລະ ຈະກາຍເປັນສີແດງຊ້ຳ ,ມີຮອຍແຕກຊ້ຳສະແດງວ່າຮັ່ງຄັ່ງແກ່ເຕັມທີ່ ແລະ ເຮົາກໍສາມາດເກັບຮັ່ງຄັ່ງໄປປ່ອຍໃນເນື້ອທີ່ເຮົາກະກຽມໄວ້. ຜົນຜະລິດສະເລ່ຍ 800-1000 ກິໂລ / ຮຕ

__ໝາຍເຫດ__:

ຖ້າຈະຂາຍເປັນສິ້ນຄ້າເຮົາຕ້ອງເອົາຄັ່ງທີ່ແກະອອກຕົ້ນຖົ່ວແຮໄປແຊ່ນ້ຳ ປະມານ 12-15 ຊົ່ວໂມງ,ແລ້ວນຳເອົາຄັ່ງໄປແຕກແດດຈົນແຫ້ງດີ,ຈິ່ງສາມາດສົ່ງອອກເປັນສິ້ນຄ້າໄດ້.



ຄັ່ງມີອາຍຸແກ່ເຕັມທີ່

